**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ

ພາກວິຊາຄູ ພາສາອັງກິດ-ໄອຊີທີ ເລກທີ 025/ອກ.ອທ

ນະຄອນຫຼວງວຽງຈັນ, ວັນທີ 24 ມີນາ 2025

# ບົດສະຫຼຸບປະຈຳເດືອນ 3/2025 ແລະ ແຜນວຽກຈຸດສຸມເດືອນ 4/2025

**ຮຽນ:** ທ່ານ ຜູ້ອຳນວຍການວິທະຍາໄລຄູ ດົງຄຳຊ້າງ

**ເລື່ອງ:** ບົດສະຫຼຸບປະຈຳເດືອນ 3/2025 ແລະ ແຜນວຽກຈຸດສຸມປະຈຳເດືອນ 3/2025 ຂອງພາກວິຊາຄູ ພາສາອັງກິດ-ໄອຊີທີ

ພາກວິຊາຄູ ພາສາອັງກິດ-ໄອຊີທີ ໄດ້ສັງລວມແຜນການເຄື່ອນໄຫວປະຈຳເດືອນ 2/2025 ແລະ ແຜນຈຸດສຸມປະຈຳເດືອນ 4/2025 ດັ່ງນີ້:

## I. ການເຄື່ອນໄຫວວຽກງານທີ່ພົ້ນເດັ່ນປະຈຳເດືອນ 3/2025

### ກ. ວຽກງານແນວຄິດການເມືອງ, ການຈັດຕັ້ງ ແລະ ນະໂຍບາຍ

1. ພະນັກງານສ່ວນຫຼາຍມີແນວຄິດຫຼັກໝັ້ນດີ ແລະ ມີຄວາມອຸ່ນອ່ຽງທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ.
2. ມີຄວາມຮັບຜິດຊອບຕໍ່ໜ້າທີ່ມອບໝາຍໃຫ້ເປັນຢ່າງດີ.
3. ປະຕິບັດ ແລະ
ນັບຖືລະບຽບຂອງພັກ-ລັດໄດ້ເປັນຢ່າງດີເຊິ່ງມັນໄດ້ສະແດງອອກໃນການປະຕິບັດໂມງເວລາ ແຕ່ງກາຍ, ການໄປ-ການມາ ແລະ ການປະຕິບັດວຽກງານແຕ່ລະໜ້າວຽກ.

### ຂ. ວຽກງານວິຊາສະເພາະ

1. ຄູທຸກຄົນໄດ້ເອົາໃຈໃສ່ຂຶ້ນຫ້ອງສອນເປັນປົກກະຕິ.
2. ນຳພານັກສຶກສາຄູອອກແຮງງານໃນຕອນແລງວັນພຸດ
3. ນຳພານັກສຶກສາຄູພາຍໃນສາຍອອກແຮງງານໃນເຂດຮັບຜິດຊອບ
4. ຕິດຕາມ, ຊຸກຍູ້ ການຈັດການຮຽນການສອນຂອງຄູ ແລະ ນັກສຶກສາໃນພາກວິຊາ
5. ຈັດຕາຕະລາງຄູສອນໃນຖານຂໍ້ມູນ
6. ສືບຕໍ່ເຮັດບົດວິໄຈ
7. ຕິດຕາມຊ່ວຍເຫຼືອຄູອາສາສະໝັກທີ່ສອນໃນວິທະຍາໄລຄູ
8. ລົງຕິດຕາມນັກສຶກສາລົງຝຶກຫັດວິຊາຊີບຄູ
9. ເຂົ້າຮ່ວມສ້າງຂະບວນການຍ່າງ ເພື່ອສຸຂະພາບ ສະເຫຼີມສະຫຼອງວັນແມ່ຍິງສາກົນ ວັນທີ 8 ມີນາ 2025ພາຍໃຕ້ຄຳຂວັນ: "ສິດທິ, ຄວາມສະເໝີພາບ ແລະ ຄວາມເຂັ້ມແຂງ ເພື່ອແມ່ຍິງ ແລະ ເດັກຍິງທຸກຄົນ" "For All women and girl: Rights. Equality. Empowerment" ຄັ້ງວັນທີ 01 ມີນາ 2025, ທີ່ສວນປະຕູໄຊ, ນະຄອນຫຼວງວຽງຈັນ
10. ເຂົ້າຮ່ວມກອງປະຊຸມໃຫຍ່ ຜູ້ແທນສະຫະພັນແມ່ຍິງກະຊວງສຶກສາແລະກິລາ ທີ່ ມຊ 05/3/2025
11. ເຂົ້າຮ່ວມກິດຈະກຳສະເຫລີມສະຫລອງເພື່ອຂໍານັບຮັບຕ້ອນວັນແມ່ຍິງສາກົນ ຄົບຮອບ 115 ( ວັນທີ 8 ມີນາ 1910 ຫາ ວັນທີ 8 ມີນາ 2025 ) ທີ່ວິທະຍາໄລຄູ ດົງຄຳຊ້າງ

12. ຝຶກອົບຮົມ ກ່ຽວກັບ ການນໍາໃຊ້ເຄື່ອງມືປະເມີນທົດສອບທັກສະພາສາລາວ ຂັ້ນ ປ. 2 ຢູ່ທີ່ ຫ້ອງ ປະຊຸມໃຫຍ່ ຂອງ ສະຖາບັນ ຄົ້ນຄວ້າວິທະຍາສາດການສຶກສາ ໃນໄລຍະວັນທີ 18-21 ມີນາ 2025
13. ອັບເດດຂໍ້ມູນລົງເວັບໄຊຣ໌ຂອງພາກວິຊາ

❖ **ຂໍ້ຄົງຄ້າງ:** ຍັງມີບາງວຽກທີ່ຕ້ອງໄດ້ສືບຕໍ່ປະຕິບັດ ແລະ ປະຕິບັດແບບຕໍ່ເນື່ອງ

## II. ແຜນວຽກຈຸດສຸມປະຈໍາເດືອນ 4/2025

### ກ. ວຽກງານແນວຄິດການເມືອງ, ການຈັດຕັ້ງ ແລະ ນະໂຍບາຍ

1. ສືບຕໍ່ແນວຄິດຫຼັກໝັ້ນ, ເຊື່ອໝັ້ນຕໍ່ການນໍາພາຂອງຂອງພັກ
2. ມີຄວາມຮັບຜິດຊອບຕໍ່ໜ້າທີ່ມອບໝາຍໃຫ້ເປັນຢ່າງດີ.
3. ຫ້າວຫັນປະຕິບັດ ແລະ ນັບຖືລະບຽບຂອງພັກ-ລັດ

### ຂ. ວຽກງານວິຊາສະເພາະ

1. ສືບຕໍ່ຂຶ້ນຫ້ອງສອນປົກກະຕິ.
2. ສືບຕໍ່ນໍາພານັກສຶກສາອອກແຮງງານໃນເຂດຮອບຜິດຊອບ
3. ສືບຕໍ່ຕິດຕາມ, ຊຸກຍູ້ ການຈັດການຮຽນການສອນຂອງຄູ ແລະ ນັກສຶກສາໃນພາກວິຊາ
4. ສືບຕໍ່ຕິດຕາມ, ຊຸກຍູ້ ຊ່ວຍເຫຼືອຄູອາສາສະໝັກທີ່ລົງຝຶກສອນຢູ່ວິທະຍາໄລຄູ
5. ສືບຕໍ່ເຮັດບົດວິໄຈ
6. ຮ່ວມໂມງສອນ
7. ຈັດສະພາບແວດລ້ອມເຂດທີ່ຮັບຜິດຊອບ
8. ລົງຕິດຕາມການລົງຝຶກຫັດຂອງນັກສຶກສາປີສຸດທ້າຍ
9. ຊ່ວຍເຫຼືອນັກສຶກສາໃນການເຮັດບົດວິໄຈຈົບຊັ້ນ
10. ຈັດຄູສອນເພື່ອກະກຽມສອນຊ່ວງພັກສິ້ນປີຮຽນ
11. ຮຽບຮຽງເອກະສານປະກອບການສອນຊ່ວງພັກສິ້ນປີຮຽນ

## III. ຂໍ້ສະເໜີ

ດັ່ງນັ້ນ, ພາກວິຊາຄູ ພາສາອັງກິດ-ໄອຊີທີ ຈຶ່ງລາຍງານມາຍັງທ່ານເພື່ອຮັບຊາບຕາມທາງຄວນດ້ວຍ.

**ຫົວໜ້າພາກວິຊາຄູ ພາສາອັງກິດ-ໄອຊີທີ** **ຜູ້ສັງລວມ**